# ການນຳໃຊ້ສິ່ງເສດເຫລືອຈາກກະສິກຳເປັນອາຫານສຳລັບສັດລ້ຽງເອື້ອງ

ສັດລ້ຽງເອື້ອງໂດຍທົ່ວໄປກໍ່ຈະກິນອາຫານຫຍາບເປັນຫລັກ ເຊັ່ນ: ຫຍ້າສົດ, ຫຍ້າໝັກ, ຫຍ້າແຫ້ງ, ເຟືອງ ແລະ ເສດເຫລືອຈາກການຜະລິດກະສິກຳ ຊຶ່ງເປັນອາຫານທີ່ຄຸນຄ່າທາງໂພສະນາການຕ່ຳ ເຖິງແມ່ນສັດຈະກິນອາຫານ ຫຍາບພຽງຢ່າງດຽວກໍ່ສາມາດມີຊີວິດຢູ່ໄດ້ ແຕ່ອາດຈະເຮັດໃຫ້ການຈະເລີນເຕີບໂຕມີຂີດຈຳ ກັດ, ສຸຂະພາບອ່ອນແອ ແລະ ເຈັບປ່ວຍງ່າຍ. ດັ່ງນັ້ນ, ຖ້າຢາກໃຫ້ສັດຕຸ້ຍພີ ມີສຸພາບສົມບູນ ໃຫ້ລູກດີ ອາຫານຄວນປະກອບມີ ອາຫານຫຍາບ, ອາຫານເຂັ້ມຂຸ້ນ ແລະ ແຮ່ທາດ.







## ອາຫາບທີ່ໄດ້ຈາກເສດເຫລືອຂອງການປູກ

### ໃຊ້ຮ່ວມກັບອາຫານເຂັ້ມຂຸ້ນ

| ອາຫານຫຍາບ | ໂປຣຕີນ |
|---|---|
| ເຟືອງ | 2.76 |
| ເຟືອງລາດຢູເຣຍ-ກາກນ້ຳຕານ | 4.99 |
| ເຟືອງໝັກຢູເຣຍ | 7.88 |
| ຕົ້ນສາລີອ່ອນ | 2.45 |
| ຕົ້ນສາລີຫວານຫລັງເກັບກ່ຽວ | 1.96 |
| ສາລີບົດທັງຝັກ | 6.78 |
| ແກນສາລີ | 1.90 |
| ແກນສາລີໝັກຢູເຣຍ | 5.50 |
| ຍອດອ້ອຍສົດ | 2.46 |
| ຍອດອ້ອຍແຫ້ງ | 5.51 |
| ເຄືອ ແລະ ໃບຖົ່ວເຫລືອງແຫ້ງ | 6.23 |
| ເປືອກໝາກນັດ | 0.68 |
| ຈຸກໝາກນັດ | 1.51 |
| ຕົ້ນ ແລະ ໃບໝາກນັດ | 1.01 |
| ຕົ້ນກ້ວຍ | 0.13 |
| ໃບກ້ວຍ | 3.36 |
| ເປືອກກ້ວຍສຸກ | 1.11 |
| ໃບປໍແຫ້ງ | 15.50 |
| ຕົ້ນຖົ່ວດິນສົດ | 12.30 |
| ໃບຖົ່ວດິນແຫ້ງ | 18.00 |
| ໃບຜັກຕົບຊາວາແຫ້ງ | 14.24 |
| ໃບແຄຂາວ | 23.50 |
| ໃບແຄຝລັ່ງ | 14.70 |
| ໃບ ແລະ ໝາກຖົ່ວແຮ | 24.60 |

## ສູດອາຫານເຂັ້ມຂຸ້ນສຳລັບງົວພື້ນເມືອງ

### ອາຍຸ 7 ເດືອນຂຶ້ນໄປ

| ວັດຖຸດິບ | ສູດ | | | |
|---|---|---|---|---|
| | 1 | 2 | 3 | 4 |
| ຫົວອາຫານ | | | | |
| ສາລີບົດ | | 80 | 40.4 | 58 |
| ມັນຕົ້ນຕາກແຫ້ງ | 38 | | 11 | |
| ເຂົ້າປາຍ | 10 | | | |
| ຮຳອ່ອນ | 30 | | 29 | 29 |
| ໃບກະຖິນແຫ້ງ | 16 | 16.4 | | |
| ໃບມັນຕົ້ນແຫ້ງ | | | 16 | |
| ໃບຖົ່ວແຮແຫ້ງ | | | | 10 |
| ຢູເຣຍ | 2 | 1.5 | 1.5 | 1.2 |
| ປາປົ່ນ | 2 | | | |
| ກາກນ້ຳຕານ | | | | |
| ເກືອ | 1 | 1 | 1 | 1 |
| ກະດູກປົ່ນ | 1 | 1 | 1 | 1 |
| ກຳມະຖັນ (ມາດ) | 0.1 | 0.1 | 0.1 | |
| **ລວມ (ກລ)** | **100** | **100** | **100** | **100** |





## ສູດອາຫານເຂັ້ມຂຸ້ນສຳລັບແບ້

| ວັດຖຸດິບ | ສູດ | | |
|---|---|---|---|
| | ພໍ່ພັນ | ແມ່ພັນ | ແບ້ລຸ້ນ |
| ສາລີບົດ/ເຂົ້າປາຍ | 40 | 30 | 48 |
| ຮຳອ່ອນ | 53.5 | 50 | 25 |
| ປາປົ່ນ | | 7 | 18 |
| ໃບກະຖິນແຫ້ງ | | 10 | 6 |
| ຢູເຣຍ | 1.5 | 1 | |
| ກາກນ້ຳຕານ | 2 | | |
| ເກືອ | 1 | 0.6 | 1 |
| ກະດູກປົ່ນ | 2 | 1.4 | 2 |
| **ລວມ (ກລ)** | **100** | **100** | **100** |









ອາຫານດີ ສັດໃຫຍ່ໄວ ໃຊ້ເວລາລ້ຽງສັ້ນ ຫລຸດຜ່ອນຕົ້ນທຶນ ມີກຳໄລຫລາຍ

ບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຂືອນຈັກ, ໜ່ວຍງານຟື້ນຟູຊີວິດການເປັນຢູ່

ມີນາ 2013